Ottawa County Health Department

# ຄວາມຈິງຕໍ່ມວນຊົນ

## ເພີທູສິສ (ພະຍາດໄອໄກ່) [PERTUSSIS/WHOOPING COUGH]

### ພະຍາດໄອໄກ່ຄືຫຍັງ?

ພະຍາດໄອໄກ່ເປັນເຊື້ອໂຣກແບັກແທເລຍໃນທໍ່ຫາຍໃຈ. ມັນມີຊື່ໜຶ່ງອີກວ່າ ເພີທູສິສ.

### ພະຍາດໄອໄກ້ແຜ່ລາມແນວໃດ?

ພະຍາດໄອໄກ່ອາດຈະແຜ່ລາມດ້ວຍວິທີດັ່ງຕໍ່ໄປນີ້:

- ຫາຍໃຈເອົາຝອຍນ້ຳຂີ້ມູກຈາກດັງ ຫລື ຮູຄໍຂອງຄົນທີ່ມີພະຍາດໄອໄກ່.
- ແຕະຕ້ອງສິ່ງຂອງທີ່ມີນ້ຳຂີ້ມູກຈັບຢູ່.

### ອາການບາງຢ່າງມີຫຍັງແດ່?

ອາການອາດຈະຮ່ວມດ້ວຍ:

- ຈາມ
- ຂີ້ມູກຍ້ອຍ
- ໄຂ້ຕ່ຳ
- ໄອເຊິ່ງຕໍ່ມາຈະໄອຫລາຍກວ່າເກົ່າສາມາດໄອນານເຖິງ 12 ເດືອນ ຫລື ນານກວ່ານັ້ນ. ອາການຂອງການໄອເປັນສຽງຂຶ້ນສູງ. ໝາຍເຫດ: ແອນ້ອຍທີ່ມີອາຍຸຕ່ຳກວ່າ 6 ເດືອນ, ເດັກນ້ອຍທີ່ໃຫຍ່ກວ່າ ແລະ ຜູ້ໃຫຍ່ສ່ວນຫລາຍແລ້ວຕອນໄອຈະບໍ່ມີສຽງຂຶ້ນສູງ.

### ຈະກວດພົບພະຍາດໄອໄກ່ໄດ້ແນວໃດ?

ໂດຍການກວດ ແລະ ກວດເບິ່ງຕົວຢ່າງທີ່ເອົາມາຈາກຮູຄໍ.

### ການຮັກສາພະຍາດໄອໄກ່ຄືຫຍັງ?

- ໃຫ້ກິນຢາຂ້າເຊື້ອໂຣກ. ຜູ້ຄົນຄວນຈະຢູ່ບ້ານຈົນກວ່າຈະໄດ້ຮັບການຮັກສາ 5 ມື້.
- ແອນ້ອຍອາຍຸ 2 ເດືອນ ຫລື ໃຫຍ່ກວ່ານັ້ນຕ້ອງຮັກສາເພີ່ມເຕີມ.
- ຄົນທີ່ມີອາຍຸ 10 ປີ ຫລື ໃຫຍ່ກວ່ານັ້ນຕ້ອງສັກສາເພີ່ມເຕີມ.
- ລ້າງມືຂອງທ່ານຫລັງຈາກສັ່ງຂີ້ມູກ, ໄອ ຫລື ແຕະຕ້ອງສິ່ງທີ່ຕິດອາຈົມ.

ສຳລັບລາຍລະອຽດເພີ່ມເຕີມກ່ຽວກັບ ພະຍາດໄອໄກ່ ໃຫ້ຕິດຕໍ່ໄປທີ່:

Ottawa County Health Department
www.miOttawa.org
Center for Disease Control and Prevention
www.cdc.gov/ncidod/dbmd/diseaseinfo/pertussis_t.htm
ເລກໂທຣະສັບ: (888) 246-2675

12251 James St., Suite 400
Holland, MI 49424
ເລກໂທຣະສັບ: (616) 396-5266
ເລກແຟັກ: (616) 393-5643
ແວບໄຊ: www.miOttawa.org